ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 1294 /ທຄຕລ.2026
ນະຄອນຫຼວງວຽງຈັນ, ວັນທີ: 13 APR 2026

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາ ບໍລິສັດ ຮັບຈັດງານ (Organizer) ຢູ່ພາຍໃນ ສປປ ລາວ.

**ເລື່ອງ:** ເຊີນເຂົ້າຮ່ວມການປະມູນລາຄາ ຮັບຈັດງານເປີດໂຕຜະລິດຕະພັນບັດ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາ ບໍລິສັດ ທີ່ມີຄວາມສົນໃຈ ເຂົ້າຮ່ວມການປະມູນລາຄາ ຮັບເໝົາຈັດງານ ເປີດໂຕຜະລິດຕະພັນບັດ ຂອງ ທຄຕລ.

- ມື້ຈັດງານ ວັນສຸກ, ທີ 08/05/2026, ສະຖານທີ່: ໂຮງແຮມແລນມາກ
- ການຈັດງານ ຕາມລາຍລະອຽດລຸ່ມນີ້:

| ລ/ດ | ໜ້າວຽກ |
|---|---|
| 1 | ລະບົບໄຟ, ແສງສີສຽງ, ຕົບແຕ່ງ, ປະດັບປະດາ |
| 2 | ວີດີໂອໂຄສະນາ (TVC) |
| 3 | ກິດຈະກຳຕ່າງໆ (photo booth) |
| 4 | ລະບົບການລົງທະບຽນແຂກ ໃຫ້ເປັນແບບ (Online ຫຼື Electronic) |
| 5 | ສື່ສິ່ງພິມ |
| 6 | ປ້າຍໂຄສະນາ, Back Drop, ສາກ ແລະ ບັດເຊີນ |
| 7 | ກຽມວີດີໂອນັບຖອຍຫລັງເປີດໂຕ ຜະລິດຕະພັນບັດ |
| 8 | Create HighLight ຂອງການເປີດໂຕຜະລິດຕະພັນ |
| 9 | ເກັບພາບບັນຍາກາດທັງໝົດພາຍໃນງານ |
| 10 | ຈັດລະບົບ Live Streaming |
| 11 | ພິທີກອນ ດຳເນີນລາຍການ (ພາສາລາວ-ອັງກິດ), ວາລະຂອງງານ |
| 12 | ຈັດຫາ Influencer 2 ຄົນ ມາຮ່ວມງານ ແລະ ລົງພາບ ຫຼື ວີດີໂອໂປຣໂໝດງານ |
| 13 | ອື່ນໆ |

**⏩ ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້:**

***ເອກະສານຊອງທີ 1:**

1.1 ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດທີ່ກ່ຽວຂ້ອງ ຢ່າງໜ້ອຍ 3 ປີຂຶ້ນໄປ ແລະ ໃຫ້ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2023, 2024, 2025 ແລະ ເອກະສານກ່ຽວກັບຜົນງານຜ່ານມາຂອງບໍລິສັດ.

1.2 ສາມາດຍື່ນເອກະສານຂ້າງເທິງໄດ້ ນັບຈາກວັນນີ້ຈົນເຖິງ ວັນສຸກ, ທີ 17/04/2026 ກ່ອນເວລາ 15:00 ໂມງ ໂດຍການສົ່ງຟາຍສະແກນເປັນ PDF ເຂົ້າມາທີ່ Email: procurement@bcel.com.la.

1.3 ຜູ້ສະໜອງຕ້ອງມານຳສະເໜີຮູບແບບການຈັດງານ ໃນວັນຈັນ, ທີ 20/04/2026 ຕອນບ່າຍ.

***ເອກະສານຊອງທີ 2 (ປິດຊອງ):**

2.1 ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາ ໃນວັນພະຫັດ, ທີ **23/04/2026 ເວລາ 09:00** ໂມງ. ສະນັ້ນ, ຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົວເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5/2 ຕຶກ C ສໍານັກງານໃຫຍ່ ທຄຕລ.

2.2 ໃບສະເໜີລາຄາໃຫ້ລະບຸ ລາຄາ/ໜ່ວຍ ແລະ ລວມມູນຄ່າອາກອນທັງໝົດ ເປັນສະກຸນເງິນກີບ.

2.3 ຜູ້ສະໜອງຕ້ອງວາງເງິນຄໍ້າປະກັນການປະມູນບໍ່ໃຫ້ຫຼຸດ 10% ຂອງມູນຄ່າທັງໝົດລວມອາກອນ ດ້ວຍໜັງສືຄໍ້າປະກັນທີ່ອອກ ໂດຍ ທຄຕລ (ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງວັນທີ 30/05/2026) ຫຼື ແຊັກທີ່ວີຊ່າແລ້ວ (ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງແຊັກ/ໜັງສື ຄໍ້າປະກັນດັ່ງກ່າວຄືນໃຫ້ຜູ້ສະໜອງທີ່ບໍ່ໄດ້ຮັບການຄັດເລືອກ, ສໍາລັບຜູ້ສະໜອງທີ່ໄດ້ຮັບການຄັດເລືອກ ແມ່ນຈະສົ່ງຄືນຫຼັງຈາກສໍາເລັດວຽກທັງໝົດຕາມສັນຍາ.

2.4 ຖ້າຜູ້ສະໜອງບໍ່ວາງເງິນຄໍ້າປະກັນການປະມູນ ຕາມທີ່ລະບຸໄວ້ໃນຂໍ້ທີ 2.3 ແມ່ນ ທຄຕລ ຈະປະຕິເສດການຍື່ນຊອງໃບສະເໜີລາຄາ.

⏩ **ໝາຍເຫດ**: ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກໍານົດຂ້າງເທິງ, ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

⏩ **ເງື່ອນໄຂສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທໍານຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງບໍລິສັດ.
- **ການຊໍາລະແມ່ນຈ່າຍເງິນ 02 ງວດ:** ພາຍຫຼັງເຊັນສັນຍາທັງສອງຝ່າຍສໍາເລັດ ຊໍາລະ 15% ແລະ ສໍາເລັດວຽກແມ່ນຊໍາລະອີກ 85%.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອໍານວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນ.ສາຍສະໜອນ ຈັນທະຈັກ

ຕິດຕໍ່ພົວພັນ:
021 213200 ຕໍ່ 414
020 2887 7722